**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ ເລກທີ 254 /ສສກ
ນະຄອນຫຼວງວຽງຈັນ, ວັນທີ 27 ມັງກອນ 2023

# ຂໍ້ຕົກລົງ
## ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບໜ່ວຍງານວິຊາການ ຂະແໜງການສຶກສາທິການ ແລະ ກິລາ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ, ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021;
- ອີງຕາມ ຖະແຫຼງການວຽງຈັນກ່ຽວກັບການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ (2016-2025) ທີ່ເຊັນຮັບຮອງໂດຍທ່ານລັດຖະມົນຕີກະຊວງການຕ່າງປະເທດຂອງ ສປປ ລາວ ແລະ ຕາງໜ້າຄູ່ຮ່ວມພັດທະນາ 16 ພາກສ່ວນ ໃນກອງປະຊຸມໂຕະມົນຄັ້ງທີ 12 ຄັ້ງວັນທີ 27 ພະຈິກ 2015.
- ອີງຕາມ ມະຕິກອງປະຊຸມໜ່ວຍງານວິຊາການຂະແໜງການສຶກສາທິການ ແລະ ກິລາ ລະດັບຜູ້ບໍລິຫານຈັດຂຶ້ນໃນວັນທີ 22 ພະຈິກ 2022.
- ອີງຕາມ ການສະເໜີຂອງກົມແຜນການ, ກະຊວງສຶກສາທິການ ແລະ ກິລາ.

**ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ຕົກລົງ:**

**ມາດຕາ 1: ແຕ່ງຕັ້ງຄະນະຮັບຜິດຊອບໜ່ວຍງານວິຊາການຂະແໜງການສຶກສາທິການ ແລະ ກິລາ ດັ່ງນີ້:**

**ກ. ຄະນະຮັບຜິດຊອບຊີ້ນຳລວມ**

- **ຄະນະຮັບຜິດຊອບຊີ້ນຳລວມລະດັບບໍລິຫານ**

| | | |
|---|---|---|
| 1) | ທ່ານ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ | ເປັນປະທານ |
| 2) | ທ່ານ ເອກອັກຄະລັດຖະທູດ ສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ | ເປັນປະທານຮ່ວມ |
| 3) | ທ່ານ ເອກອັກຄະລັດຖະທູດສະຫະພາບເອີຣົບ ປະຈຳ ສປປ ລາວ | ເປັນປະທານຮ່ວມ |
| 4) | ທ່ານ ຫົວໜ້າກົມແຜນການ | ເປັນຮອງ |
| 5) | ທ່ານ ຫົວໜ້າຫ້ອງການກະຊວງສຶກສາທິການ ແລະ ກິລາ | ເປັນຮອງ |
| 6) | ທ່ານ ຫົວໜ້າກົມກວດກາ | ເປັນຄະນະ |
| 7) | ທ່ານ ຫົວໜ້າກົມການເງິນ | ເປັນຄະນະ |
| 8) | ທ່ານ ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ | ເປັນຄະນະ |
| 9) | ທ່ານ ຫົວໜ້າກົມປະກັນຄຸນນະພາບການສຶກສາ | ເປັນຄະນະ |
| 10) | ທ່ານ ຫົວໜ້າກົມຮ່ວມມືກັບຕ່າງປະເທດ | ເປັນຄະນະ |
| 11) | ທ່ານ ຫົວໜ້າກົມການສຶກສາກ່ອນໄວຮຽນ | ເປັນຄະນະ |
| 12) | ທ່ານ ຫົວໜ້າກົມສາມັນສຶກສາ | ເປັນຄະນະ |
| 13) | ທ່ານ ຫົວໜ້າກົມສ້າງຄູ | ເປັນຄະນະ |

14) ທ່ານ ຫົວໜ້າກົມການສຶກສານອກໂຮງຮຽນ ເປັນຄະນະ
15) ທ່ານ ຫົວໜ້າກົມອາຊີວະສຶກສາ ເປັນຄະນະ
16) ທ່ານ ຫົວໜ້າກົມການສຶກສາຊັ້ນສູງ ເປັນຄະນະ
17) ທ່ານ ຫົວໜ້າກົມກິດຈະການນັກສຶກສາ ເປັນຄະນະ
18) ທ່ານ ຫົວໜ້າກົມກິລາລະດັບສູງ ເປັນຄະນະ
19) ທ່ານ ຫົວໜ້າກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ເປັນຄະນະ
20) ທ່ານ ຫົວໜ້າກົມຄຸ້ມຄອງວິທະຍາສາດ ເປັນຄະນະ
21) ທ່ານ ຫົວໜ້າຫ້ອງການສະພາວິທະຍາສາດ ເປັນຄະນະ
22) ທ່ານ ຜູ້ອຳນວຍການສະຖາບັນຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກຳ (ສວນ) ເປັນຄະນະ
23) ທ່ານ ຜູ້ອຳນວຍການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ເປັນຄະນະ
24) ທ່ານ ຜູ້ອຳນວຍການ ສຳນັກພິມສຶກສາ ແລະ ກິລາ ເປັນຄະນະ
25) ທ່ານ ຜູ້ອຳນວຍການສະຖາບັນພັດທະນາການບໍລິຫານການສຶກສາ ເປັນຄະນະ
26) ທ່ານ ຜູ້ອຳນວຍການການສູນສົ່ງເສີມການສຶກສາຮຽນຮ່ວມ ເປັນຄະນະ
27) ທ່ານ ຜູ້ຕາງໜ້າຈາກຄູ່ຮ່ວມພັດທະນາ ເປັນຄະນະ
28) ທ່ານ ຜູ້ຕາງໜ້າອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ/ສະມາຄົມ
ບໍ່ຫວັງຜົນກຳໄລ ເປັນຄະນະ

- **ຄະນະຮັບຜິດຊອບຊີ້ນຳລວມລະດັບວິຊາການ**

1) ທ່ານ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເປັນປະທານ
2) ທ່ານ ຮອງເອກອັກຄະລັດຖະທູດ ສະຖານທູດອົດສະຕຣາລີປະຈຳ ສປປ ລາວ ເປັນປະທານຮ່ວມ
3) ທ່ານ ຫົວໜ້າຝ່າຍການຮ່ວມມື,ຫ້ອງການສະຫະພາບເອີຣົບປະຈຳ ສປປ ລາວ ເປັນປະທານຮ່ວມ
4) ທ່ານ ຫົວໜ້າກົມແຜນການ ເປັນຮອງ
5) ທ່ານ ຫົວໜ້າຫ້ອງການກະຊວງສຶກສາທິການ ແລະ ກິລາ ເປັນຮອງ
6) ທ່ານ ຫົວໜ້າກົມກວດກາ ເປັນຄະນະ
7) ທ່ານ ຫົວໜ້າກົມການເງິນ ເປັນຄະນະ
8) ທ່ານ ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ເປັນຄະນະ
9) ທ່ານ ຫົວໜ້າກົມປະກັນຄຸນນະພາບການສຶກສາ ເປັນຄະນະ
10) ທ່ານ ຫົວໜ້າກົມຮ່ວມມືກັບຕ່າງປະເທດ ເປັນຄະນະ
11) ທ່ານ ຫົວໜ້າກົມການສຶກສາກ່ອນໄວຮຽນ ເປັນຄະນະ
12) ທ່ານ ຫົວໜ້າກົມສາມັນສຶກສາ ເປັນຄະນະ
13) ທ່ານ ຫົວໜ້າກົມສ້າງຄູ ເປັນຄະນະ
14) ທ່ານ ຫົວໜ້າກົມການສຶກສານອກໂຮງຮຽນ ເປັນຄະນະ
15) ທ່ານ ຫົວໜ້າກົມອາຊີວະສຶກສາ ເປັນຄະນະ
16) ທ່ານ ຫົວໜ້າກົມການສຶກສາຊັ້ນສູງ ເປັນຄະນະ
17) ທ່ານ ຫົວໜ້າກົມກິດຈະການນັກສຶກສາ ເປັນຄະນະ
18) ທ່ານ ຫົວໜ້າກົມກິລາລະດັບສູງ ເປັນຄະນະ
19) ທ່ານ ຫົວໜ້າກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ເປັນຄະນະ
20) ທ່ານ ຫົວໜ້າກົມຄຸ້ມຄອງວິທະຍາສາດ ເປັນຄະນະ
21) ທ່ານ ຫົວໜ້າຫ້ອງການສະພາວິທະຍາສາດ ເປັນຄະນະ
22) ທ່ານ ຜູ້ອຳນວຍການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ເປັນຄະນະ
23) ທ່ານ ຜູ້ອຳນວຍການ ສຳນັກພິມສຶກສາ ແລະ ກິລາ ເປັນຄະນະ

24) ທ່ານ ຜູ້ອຳນວຍການສະຖາບັນພັດທະນາການບໍລິຫານການສຶກສາ ເປັນຄະນະ
25) ທ່ານ ຜູ້ອຳນວຍການ ສະຖາບັນຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກຳ ເປັນຄະນະ
26) ທ່ານ ຜູ້ອຳນວຍການສູນສົ່ງເສີມການສຶກສາຮຽນຮ່ວມ ເປັນຄະນະ
27) ທ່ານ ຜູ້ຕາງໜ້າຈາກຄູ່ຮ່ວມພັດທະນາ ເປັນຄະນະ
28) ທ່ານ ຜູ້ຕາງໜ້າອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ/ສະມາຄົມບໍ່ຫວັງຜົນກຳໄລ ເປັນຄະນະ

- **ຄະນະກອງເລຂາໜ່ວຍງານວິຊາການ**

1) ທ່ານ ຫົວໜ້າກົມແຜນການ ເປັນຫົວໜ້າ
2) ທ່ານ ຮອງຫົວໜ້າກົມແຜນການ ເປັນຮອງ
3) ທ່ານ ຫົວໜ້າພະແນກຄຸ້ມຄອງໂຄງການ, ກົມແຜນການ ເປັນຄະນະ
4) ທ່ານ ຫົວໜ້າພະແນກແຜນການ, ກົມແຜນການ ເປັນຄະນະ
5) ທ່ານ ຜູ້ຕາງໜ້າ ຈາກສະຖານທູດອົດສະຕຣາລີປະຈຳ ສປປ ລາວ ເປັນຄະນະ
6) ທ່ານ ຜູ້ຕາງໜ້າ ຈາກຫ້ອງການສະຫະພາບເອີຣົບປະຈຳ ສປປ ລາວ ເປັນຄະນະ
7) ທ່ານ ຊ່ຽວຊານຂອງໂຄງການຊ່ວຍເຫຼືອດ້ານວິຊາການຂອງສະຫະພາບເອີຣົບ ເປັນຄະນະ
8) ທ່ານ ຜູ້ຕາງໜ້າ ຈາກອົງການຢູນີເຊບ ປະຈຳ ສປປ ລາວ ເປັນຄະນະ
9) ທ່ານ ວິຊາການ ພະແນກຄຸ້ມຄອງໂຄງການ, ກົມແຜນການ ເປັນຜູ້ຊ່ວຍວຽກ
10) ທ່ານ ຜູ້ປະສານງານຂອງແຕ່ລະໜ່ວຍງານວິຊາການຂະແໜງການຍ່ອຍ ເປັນຜູ້ຊ່ວຍວຽກ

## ຂ. ຄະນະຮັບຜິດຊອບ ໜ່ວຍງານວິຊາການຂະແໜງການຍ່ອຍ

ໜ່ວຍງານວິຊາການຂະແໜງການຍ່ອຍ ປະກອບມີ 7 ໜ່ວຍງານ ຊຶ່ງຄະນະຮັບຜິດຊອບແຕ່ລະໜ່ວຍງານມີ ດັ່ງນີ້:

### 1. ໜ່ວຍງານວິຊາການຂະແໜງການຍ່ອຍ ການສຶກສາກ່ອນໄວຮຽນ

1) ທ່ານ ຫົວໜ້າກົມການສຶກສາກ່ອນໄວຮຽນ ເປັນປະທານ
2) ອົງການ ຢູນິເຊັບ ປະຈຳ ສປປ ລາວ ເປັນປະທານຮ່ວມ
3) ອົງການ ຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ ເປັນປະທານຮ່ວມ
4) ທ່ານ ຮອງຫົວໜ້າກົມການສຶກສາກ່ອນໄວຮຽນ ເປັນຮອງ
5) ທ່ານ ຮອງຫົວໜ້າກົມແຜນການ ເປັນຄະນະ
6) ທ່ານ ຮອງຫົວໜ້າກົມກວດກາ ເປັນຄະນະ
7) ທ່ານ ຮອງຫົວໜ້າກົມການເງິນ ເປັນຄະນະ
8) ທ່ານ ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ເປັນຄະນະ
9) ທ່ານ ຮອງຫົວໜ້າກົມສ້າງຄູ ເປັນຄະນະ
10) ທ່ານ ຮອງຫົວໜ້າກົມສາມັນສຶກສາ ເປັນຄະນະ
11) ທ່ານ ຮອງຫົວໜ້າກົມປະກັນຄຸນນະພາບການສຶກສາ ເປັນຄະນະ
12) ທ່ານ ຮອງຜູ້ອຳນວຍການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ເປັນຄະນະ
13) ທ່ານ ຮອງຫົວໜ້າຫ້ອງການສົ່ງເສີມການສຶກສາພາກເອກະຊົນ ເປັນຄະນະ
14) ທ່ານ ຜູ້ອຳນວຍການ/ຮອງສູນພັດທະນາຫຼັກສູດ ເປັນຄະນະ
15) ທ່ານ ຜູ້ອຳນວຍການ/ຮອງສູນຄົ້ນຄວ້າ ແລະ ການປະເມີນຜົນ ເປັນຄະນະ
16) ທ່ານ ຜູ້ອຳນວຍການ/ຮອງຜູ້ອຳນວຍການສູນສົ່ງເສີມການສຶກສາຮຽນຮ່ວມ ເປັນຄະນະ
17) ທ່ານ ຮອງປະທານສະມາຄົມການສຶກສາພາກເອກະຊົນ ເປັນຄະນະ
18) ທ່ານ ຜູ້ຕາງໜ້າພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ ເປັນຄະນະ
19) ທ່ານ ຜູ້ຕາງໜ້າຈາກຫ້ອງການສຶກສາທິການ ແລະ ກິລາ ເມືອງ (ນວ) ເປັນຄະນະ

| | |
|---|---|
| 20) ທ່ານ ຜູ້ຕາງໜ້າຈາກໂຮງຮຽນອະນຸບານພາກລັດ ແລະ ເອກະຊົນ | ເປັນຄະນະ |
| 21) ທ່ານ ຜູ້ຕາງໜ້າຈາກຄູ່ຮ່ວມພັດທະນາ | ເປັນຄະນະ |
| 22) ທ່ານ ຜູ້ຕາງໜ້າຈາກອົງການຈັດຕັ້ງສາກົນທີ່ບໍ່ລັດຖະບານ/ສະມາຄົມ ບໍ່ຫວັງຜົນກຳໄລ | ເປັນຄະນະ |

- **ກອງເລຂາຂະແໜງການຍ່ອຍ ການສຶກສາກ່ອນໄວຮຽນ**

| | |
|---|---|
| 1) ທ່ານ ຫົວໜ້າພະແນກບໍລິຫານ ແລະ ຄົ້ນຄວ້າ-ສັງລວມ, ກົມການສຶກສາກ່ອນໄວຮຽນ | ເປັນຫົວໜ້າ |
| 2) ທ່ານ ຫົວໜ້າພະແນກອະນຸບານສຶກສາ, ກົມການສຶກສາກ່ອນໄວຮຽນ | ເປັນຮອງ |
| 3) ທ່ານ ຫົວໜ້າພະແນກລ້ຽງເດັກ, ກົມການສຶກສາກ່ອນໄວຮຽນ | ເປັນຄະນະ |
| 4) ທ່ານ ຫົວໜ້າພະແນກກວດກາ, ຕິດຕາມ ແລະ ປະເມີນຜົນ, ກົມການສຶກສາກ່ອນໄວຮຽນ | ເປັນຄະນະ |
| 5) ທ່ານ ຜູ້ຕາງໜ້າອົງການອຸຍນີເຊັບ ແລະ ອົງການຊ່ວຍເຫຼືອເດັກສາກົນ | ເປັນຄະນະ |

**2. ໜ່ວຍງານວິຊາການຂະແໜງການຍ່ອຍ ສາມັນສຶກສາ**

| | |
|---|---|
| 1) ທ່ານ ຫົວໜ້າກົມສາມັນສຶກສາ | ເປັນປະທານ |
| 2) ທ່ານ ຫົວໜ້າກົມການສຶກສານອກໂຮງຮຽນ | ເປັນປະທານຮ່ວມ |
| 3) ອົງການອຸຍນີເຊັບ ປະຈຳ ສປປ ລາວ | ເປັນປະທານຮ່ວມ |
| 4) ອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ | ເປັນປະທານຮ່ວມ |
| 5) ອົງການຮ່ວມມືສາກົນເພື່ອການສຶກສາຜູ້ໃຫຍ່ປະຈຳ ສປປ ລາວ | ເປັນປະທານຮ່ວມ |
| 6) ທ່ານ ຮອງຫົວໜ້າກົມສາມັນສຶກສາ | ເປັນຮອງ |
| 7) ທ່ານ ຮອງຫົວໜ້າກົມການສຶກສານອກໂຮງຮຽນ | ເປັນຮອງ |
| 8) ທ່ານ ຮອງຫົວໜ້າກົມແຜນການ | ເປັນຄະນະ |
| 9) ທ່ານ ຮອງຫົວໜ້າກົມກວດກາ | ເປັນຄະນະ |
| 10) ທ່ານ ຮອງຫົວໜ້າກົມການເງິນ | ເປັນຄະນະ |
| 11) ທ່ານ ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ | ເປັນຄະນະ |
| 12) ທ່ານ ຮອງຫົວໜ້າກົມສ້າງຄູ | ເປັນຄະນະ |
| 13) ທ່ານ ຮອງຫົວໜ້າກົມ ການສຶກສາກ່ອນໄວຮຽນ | ເປັນຄະນະ |
| 14) ທ່ານ ຮອງຫົວໜ້າກົມອາຊີວະສຶກສາ | ເປັນຄະນະ |
| 15) ທ່ານ ຮອງຫົວໜ້າກົມປະກັນຄຸນນະພາບການສຶກສາ | ເປັນຄະນະ |
| 16) ທ່ານ ຮອງຜູ້ອຳນວຍການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ | ເປັນຄະນະ |
| 17) ທ່ານ ຫົວໜ້າຫ້ອງການສົ່ງເສີມການສຶກສາພາກເອກະຊົນ | ເປັນຄະນະ |
| 18) ທ່ານ ຜູ້ອຳນວຍການ/ຮອງສູນພັດທະນາຫຼັກສູດ | ເປັນຄະນະ |
| 19) ທ່ານ ຜູ້ອຳນວຍການ/ຮອງສູນຄົ້ນຄວ້າ ແລະ ການປະເມີນຜົນ | ເປັນຄະນະ |
| 20) ທ່ານ ຜູ້ອຳນວຍການ/ຮອງຜູ້ອຳນວຍການສູນສົ່ງເສີມການສຶກສາຮຽນຮ່ວມ | ເປັນຄະນະ |
| 21) ທ່ານ ປະທານ/ຮອງປະທານ ສະມາຄົມການສຶກສາພາກເອກະຊົນ | ເປັນຄະນະ |
| 22) ທ່ານ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ | ເປັນຄະນະ |
| 23) ທ່ານ ຜູ້ຕາງໜ້າຈາກ ຫ້ອງການສຶກສາທິການ ແລະ ກິລາເມືອງ (ນວ) | ເປັນຄະນະ |
| 24) ທ່ານ ຜູ້ຕາງໜ້າຜູ້ອຳນວຍການໂຮງຮຽນອະນຸບານ, ປະຖົມ, ມັດທະຍົມ ພາກລັດ ແລະ ເອກະຊົນ | ເປັນຄະນະ |
| 25) ທ່ານ ຜູ້ຕາງໜ້າຈາກຄູ່ຮ່ວມພັດທະນາ | ເປັນຄະນະ |

26) ທ່ານ ຜູ້ຕາງໜ້າຈາກອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ/ສະມາຄົມບໍ່ຫວັງຜົນກຳໄລ ເປັນຄະນະ

- **ກອງເລຂາຂະແໜງການຍ່ອຍ ສາມັນສຶກສາ**
  1) ທ່ານ ຫົວໜ້າພະແນກກວດກາ, ຕິດຕາມ ແລະ ປະເມີນຜົນ ກົມສາມັນສຶກສາ ເປັນຫົວໜ້າ
  2) ທ່ານ ຫົວໜ້າພະແນກກວດກາ, ຕິດຕາມ ແລະ ປະເມີນຜົນ, ກົມການສຶກສານອກໂຮງຮຽນ ເປັນຮອງ
  3) ທ່ານ ຫົວໜ້າພະແນກບໍລິຫານ, ຄົ້ນຄວ້າ-ສັງລວມ, ກົມການສຶກສານອກໂຮງຮຽນ ເປັນຄະນະ
  4) ທ່ານ ຫົວໜ້າພະແນກບໍລິຫານ, ຄົ້ນຄວ້າ-ສັງລວມ, ກົມສາມັນສຶກສາ ເປັນຄະນະ
  5) ທ່ານ ຫົວໜ້າພະແນກພາສາຕ່າງປະເທດ, ກົມສາມັນສຶກສາ ເປັນຄະນະ
  6) ທ່ານ ຫົວໜ້າພະແນກປະຖົມສຶກສາ, ກົມສາມັນສຶກສາ ເປັນຄະນະ
  7) ທ່ານ ຫົວໜ້າພະແນກມັດທະຍົມສຶກສາຕອນຕົ້ນ, ກົມສາມັນສຶກສາ ເປັນຄະນະ
  8) ທ່ານ ຫົວໜ້າພະແນກມັດທະຍົມສຶກສາຕອນປາຍ, ກົມສາມັນສຶກສາ ເປັນຄະນະ
  9) ທ່ານ ຫົວໜ້າພະແນກຈັດຕັ້ງ ແລະ ພະນັກງານ ກົມຈັດຕັ້ງ ແລະ ພະນັກງານ ເປັນຄະນະ
  10) ທ່ານ ຜູ້ຕາງໜ້າຈາກອົງການອຸຍນິເຊັບ, ອົງການຊ່ວຍເຫຼືອເດັກສາກົນ ແລະ ອົງການຮ່ວມມືສາກົນເພື່ອການສຶກສາຜູ້ໃຫຍ່ ເປັນຄະນະ

**3. ໜ່ວຍງານວິຊາການຂະແໜງການຍ່ອຍ ການສຶກສາຄູ**

1) ທ່ານ ຫົວໜ້າກົມສ້າງຄູ ເປັນປະທານ
2) ທ່ານ ເລຂາເອກ ສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ ເປັນປະທານຮ່ວມ
3) ອົງການ ອຸຍແນັດສະໂກ ເປັນປະທານຮ່ວມ
4) ທ່ານ ຮອງຫົວໜ້າກົມສ້າງຄູ ເປັນຮອງ
5) ທ່ານ ຮອງຫົວໜ້າກົມແຜນການ ເປັນຄະນະ
6) ທ່ານ ຮອງຫົວໜ້າກົມກວດກາ ເປັນຄະນະ
7) ທ່ານ ຮອງຫົວໜ້າກົມການເງິນ ເປັນຄະນະ
8) ທ່ານ ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ເປັນຄະນະ
9) ທ່ານ ຮອງຫົວໜ້າກົມສາມັນສຶກສາ ເປັນຄະນະ
10) ທ່ານ ຮອງກົມປະກັນຄຸນນະພາບການສຶກສາ ເປັນຄະນະ
11) ທ່ານ ຮອງຫົວໜ້າກົມຮ່ວມມືກັບຕ່າງປະເທດ ເປັນຄະນະ
12) ທ່ານ ຮອງຜູ້ອຳນວຍການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ເປັນຄະນະ
13) ທ່ານ ຮອງຜູ້ອຳນວຍການສະຖານບັນພັດທະນາການບໍລິຫານການສຶກສາ ເປັນຄະນະ
14) ທ່ານ ຜູ້ອຳນວຍການ/ຮອງຜູ້ອຳນວຍການສູນສົ່ງເສີມການສຶກສາຮຽນຮ່ວມ ເປັນຄະນະ
15) ທ່ານ ຜູ້ຕາງໜ້າ ສະຖາບັນສ້າງຄູ ເປັນຄະນະ
16) ທ່ານ ຄະນະບໍດີ ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ ເປັນຄະນະ
17) ທ່ານ ຜູ້ຕາງໜ້າຈາກຄູ່ຮ່ວມພັດທະນາ ເປັນຄະນະ
18) ທ່ານ ຜູ້ຕາງໜ້າຈາກອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ/ສະມາຄົມບໍ່ຫວັງຜົນກຳໄລ ເປັນຄະນະ

- **ກອງເລຂາຂະແໜງການຍ່ອຍ ການສຶກສາຄູ**
    1) ທ່ານ ຫົວໜ້າ ພະແນກກວດກາ, ຕິດຕາມ ແລະ ປະເມີນຜົນ, ກົມສ້າງຄູ ເປັນຫົວໜ້າ
    2) ທ່ານ ຫົວໜ້າ ພະແນກບໍລິຫານ, ຄົ້ນຄວ້າ-ສັງລວມ, ກົມສ້າງຄູ ເປັນຮອງ
    3) ທ່ານ ຫົວໜ້າ ພະແນກບຳລຸງຄູ, ກົມສ້າງຄູ ເປັນຄະນະ
    4) ທ່ານ ຫົວໜ້າ ພະແນກກໍ່ສ້າງຄູ, ກົມສ້າງຄູ ເປັນຄະນະ
    5) ທ່ານ ຜູ້ຕາງໜ້າ ສະຖານທູດອົດສະຕຣາລີ ແລະ ອຸຍແນັດສະໂກ ເປັນຄະນະ

**4. ໜ່ວຍງານວິຊາການຂະແໜງການຍ່ອຍ ການສຶກສາຫຼັງຊັ້ນມັດທະຍົມສຶກສາ**

1) ທ່ານ ຫົວໜ້າກົມການສຶກສາຊັ້ນສູງ ເປັນປະທານ
2) ທ່ານ ຫົວໜ້າກົມອາຊີວະສຶກສາ ເປັນປະທານຮ່ວມ
3) ທະນາຄານພັດທະນາອາຊີ ເປັນປະທານຮ່ວມ
4) ອົງການລຸກຊຳບວກ ເປັນປະທານຮ່ວມ
5) ທ່ານ ຮອງຫົວໜ້າກົມການສຶກສາຊັ້ນສູງ ເປັນຮອງ
6) ທ່ານ ຮອງຫົວໜ້າກົມອາຊີວະສຶກສາ ເປັນຮອງ
7) ທ່ານ ຫົວໜ້າກົມພັດທະນາສີມືແຮງງານ ແລະ ຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ
8) ທ່ານ ຮອງຫົວໜ້າກົມແຜນການ ເປັນຄະນະ
9) ທ່ານ ຮອງຫົວໜ້າກົມກວດກາ ເປັນຄະນະ
10) ທ່ານ ຮອງຫົວໜ້າກົມການເງິນ ເປັນຄະນະ
11) ທ່ານ ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ເປັນຄະນະ
12) ທ່ານ ຮອງຫົວໜ້າກົມກິດຈະການນັກສຶກສາ ເປັນຄະນະ
13) ທ່ານ ຮອງຫົວໜ້າກົມສາມັນສຶກສາ ເປັນຄະນະ
14) ທ່ານ ຮອງຫົວໜ້າກົມປະກັນຄຸນນະພາບການສຶກສາ ເປັນຄະນະ
15) ທ່ານ ຮອງຫົວໜ້າກົມການສຶກສານອກໂຮງຮຽນ ເປັນຄະນະ
16) ທ່ານ ຜູ້ອຳນວຍການສະຖາບັນພັດທະນາອາຊີວະສຶກສາ ເປັນຄະນະ
17) ທ່ານ ຮອງຜູ້ອຳນວຍການສູນສົ່ງເສີມການສຶກສາຮຽນຮ່ວມ ເປັນຄະນະ
18) ທ່ານ ອະທິການບໍດີ ມະຫາວິທະຍາໄລແຫ່ງຊາດ ເປັນຄະນະ
19) ທ່ານ ຜູ້ອຳນວຍການ ສະຖານອາຊີວະສຶກສາ ພາກລັດ ເປັນຄະນະ
20) ທ່ານ ຫົວໜ້າຫ້ອງການ ສະພາການສຶກສາຊັ້ນສູງ ເປັນຄະນະ
21) ທ່ານ ຫົວໜ້າຫ້ອງການສະພາທີ່ປຶກສາອາຊີວະສຶກສາ ເປັນຄະນະ
22) ທ່ານ ຜູ້ຕາງໜ້າຈາກສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຄະນະ
23) ທ່ານ ຜູ້ຕາງໜ້າຈາກຄູ່ຮ່ວມພັດທະນາ ເປັນຄະນະ
24) ທ່ານ ຜູ້ຕາງໜ້າຈາກອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ/ສະມາຄົມບໍ່ຫວັງຜົນກຳໄລ ເປັນຄະນະ

- **ກອງເລຂາຂະແໜງການຍ່ອຍ ການສຶກສາຫຼັງຊັ້ນມັດທະຍົມສຶກສາ**
    1) ທ່ານ ຫົວໜ້າພະແນກຄຸ້ມຄອງວິຊາການ, ກົມການສຶກສາຊັ້ນສູງ ເປັນຫົວໜ້າ
    2) ທ່ານ ຫົວໜ້າພະແນກກວດກາ, ຕິດຕາມ ແລະ ປະເມີນຜົນ, ກົມອາຊີວະສຶກສາ ເປັນຮອງ
    3) ທ່ານ ຮອງຫົວໜ້າພະແນກກວດກາ, ຕິດຕາມ ແລະ ປະເມີນຜົນ, ກົມກິດຈະການນັກສຶກສາ ເປັນຄະນະ

4) ທ່ານ ວິຊາການ ພະແນກກວດກາ, ຕິດຕາມ ແລະ ປະເມີນຜົນ, ກົມອະຊີວະສຶກສາ — ເປັນຄະນະ
5) ທ່ານ ຜູ້ຕາງໜ້າຈາກທະນາຄານພັດທະນາອາຊີ ແລະ ອົງການລຸກຊໍາບວກ — ເປັນຄະນະ

**5. ໜ່ວຍງານວິຊາການຂະແໜງການຍ່ອຍ ການບໍລິຫານ ແລະ ຄຸ້ມຄອງການສຶກສາ ແລະ ກິລາ**

1) ທ່ານ ຫົວໜ້າກົມກວດກາ — ເປັນປະທານ
2) ທ່ານ ຫົວໜ້າກົມການເງິນ — ເປັນປະທານຮ່ວມ
3) ທ່ານ ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ — ເປັນປະທານຮ່ວມ
4) ຫ້ອງການສະຫະພາບເອີຣົບ ປະຈໍາ ສປປ ລາວ — ເປັນປະທານຮ່ວມ
5) ອົງການຮ່ວມມືສາກົນຍີ່ປຸ່ນ ປະຈໍາ ສປປ ລາວ — ເປັນປະທານຮ່ວມ
6) ທ່ານ ຮອງຫົວໜ້າກົມແຜນການ — ເປັນຮອງ
7) ທ່ານ ຮອງຫົວໜ້າກົມການເງິນ — ເປັນຮອງ
8) ທ່ານ ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ — ເປັນຮອງ
9) ທ່ານ ຮອງຫົວໜ້າກົມກວດກາ — ເປັນຮອງ
10) ທ່ານ ຮອງຫົວໜ້າກົມປະກັນຄຸນນະພາບການສຶກສາ — ເປັນຄະນະ
11) ທ່ານ ຮອງຫົວໜ້າຫ້ອງການກະຊວງສຶກສາທິການ ແລະ ກິລາ — ເປັນຄະນະ
12) ທ່ານ ຮອງຫົວໜ້າກົມຮ່ວມມືກັບຕ່າງປະເທດ — ເປັນຄະນະ
13) ທ່ານ ຮອງຜູ້ອໍານວຍການສະຖາບັນພັດທະນາການບໍລິຫານການສຶກສາ — ເປັນຄະນະ
14) ທ່ານ ຮອງຜູ້ອໍານວຍການ ສໍານັກພິມສຶກສາ ແລະ ກິລາ — ເປັນຄະນະ
15) ທ່ານ ຜູ້ອໍານວຍການສູນສະຖິຕິ-ເຕັກໂນໂລຊີ ຂ່າວສານການສຶກສາ ແລະ ກິລາ — ເປັນຄະນະ
16) ທ່ານ ຮອງຜູ້ອໍານວຍການສູນສົ່ງເສີມການສຶກສາຮຽນຮ່ວມ — ເປັນຄະນະ
17) ທ່ານ ຜູ້ຕາງໜ້າຄູ່ຮ່ວມພັດທະນາ — ເປັນຄະນະ
18) ທ່ານ ຜູ້ຕາງໜ້າອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ/ສະມາຄົມ ບໍ່ຫວັງຜົນກໍາໄລ — ເປັນຄະນະ

- **ກອງເລຂາຂະແໜງການຍ່ອຍການບໍລິຫານ ແລະ ຄຸ້ມຄອງການສຶກສາ ແລະ ກິລາ**

1) ທ່ານ ຫົວໜ້າພະແນກກວດກາ, ຕິດຕາມ ແລະ ປະເມີນຜົນ, ກົມກວດກາ — ເປັນຫົວໜ້າ
2) ທ່ານ ຫົວໜ້າພະແນກແຜນການ, ກົມແຜນການ — ເປັນຮອງ
3) ທ່ານ ຫົວໜ້າພະແນກງົບປະມານ, ກົມການເງິນ — ເປັນຮອງ
4) ທ່ານ ຫົວໜ້າພະແນກກົງຈັກ ແລະ ພັດທະນາບຸກຄະລາກອນ, ກົມຈັດຕັ້ງ/ພະນັກງານ — ເປັນຄະນະ
5) ທ່ານ ຮອງຫົວໜ້າພະແນກແຜນການ, ກົມແຜນການ — ເປັນຄະນະ
6) ທ່ານ ວິຊາການ, ພະແນກກວດກາ, ຕິດຕາມ ແລະ ປະເມີນຜົນ, ກົມກວດກາ — ເປັນຄະນະ
7) ທ່ານ ຜູ້ຕາງໜ້າຈາກຫ້ອງການສະຫະພາບເອີຣົບ ແລະ ອົງການຮ່ວມມືສາກົນຍີ່ປຸ່ນ — ເປັນຄະນະ

6. **ໜ່ວຍງານວິຊາການຂະແໜງການຍ່ອຍ: ການຄົ້ນຄວ້າ ແລະ ປະເມີນຜົນການສຶກສາ**

1) ທ່ານ ຜູ້ອຳນວຍການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ເປັນປະທານ
2) ທ່ານ ຜູ້ອຳນວຍການ ສະຖາບັນຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກຳ ເປັນປະທານຮ່ວມ
3) ທ່ານ ຫົວໜ້າກົມປະກັນຄຸນນະພາບການສຶກສາ ເປັນປະທານຮ່ວມ
4) ທະນະຄານໂລກ ປະຈຳ ສປປ ລາວ ເປັນປະທານຮ່ວມ
5) ອົງການແພລນສາກົນ ປະຈຳ ສປປ ລາວ ເປັນປະທານຮ່ວມ
6) ທ່ານ ຮອງຜູ້ອຳນວຍການ ສະຖາບັນຄົ້ນຄວ້າວິທະຍາສາດ ການສຶກສາ (ສວສ) ເປັນຮອງ
7) ທ່ານ ຮອງຜູ້ອຳນວຍການ ສະຖາບັນຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກຳ ເປັນຮອງ
8) ທ່ານ ຮອງຫົວໜ້າກົມປະກັນຄຸນນະພາບການສຶກສາ ເປັນຮອງ
9) ທ່ານ ຮອງຫົວໜ້າ ກົມແຜນການ ເປັນຄະນະ
10) ທ່ານ ຮອງຫົວໜ້າ ກົມການເງິນ ເປັນຄະນະ
11) ທ່ານ ຮອງຫົວໜ້າ ກົມການສຶກສາຊັ້ນສູງ ເປັນຄະນະ
12) ທ່ານ ຮອງຫົວໜ້າກົມສາມັນສຶກສາ ເປັນຄະນະ
13) ທ່ານ ຮອງຫົວໜ້າກົມສ້າງຄູ ເປັນຄະນະ
14) ທ່ານ ຮອງຫົວໜ້າກົມການສຶກສານອກໂຮງຮຽນ ເປັນຄະນະ
15) ທ່ານ ຮອງຫົວໜ້າກົມອາຊີວະສຶກສາ ເປັນຄະນະ
16) ທ່ານ ຮອງຫົວໜ້າກົມຄຸ້ມຄອງວິທະຍາສາດ ເປັນຄະນະ
17) ທ່ານ ຮອງຫົວໜ້າຫ້ອງການສະພາວິທະຍາສາດ ເປັນຄະນະ
18) ທ່ານ ຮອງຜູ້ອຳນວຍການສູນຄົ້ນຄວ້າ ແລະ ປະເມີນຜົນການສຶກສາ, ສວສ ເປັນຄະນະ
19) ທ່ານ ຮອງຫົວໜ້າ ຫ້ອງການຄົ້ນຄວ້າວິທະຍາສາດ
20) ແລະ ການບໍລິການວິຊາການ, ມະຫາວິທະຍາໄລແຫ່ງຊາດ ເປັນຄະນະ
21) ທ່ານ ຮອງຜູ້ອຳນວຍການສະຖາບັນພັດທະນາການບໍລິຫານການສຶກສາ ເປັນຄະນະ
22) ທ່ານ ຮອງຜູ້ອຳນວຍການສູນສົ່ງເສີມການສຶກສາຮຽນຮ່ວມ ເປັນຄະນະ
23) ທ່ານ ຜູ້ຕາງໜ້າຄູ່ຮ່ວມພັດທະນາ ເປັນຄະນະ
24) ທ່ານ ຜູ້ຕາງໜ້າອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ/ສະມາຄົມ
25) ບໍ່ຫວັງຜົນກຳໄລ ເປັນຄະນະ

- **ກອງເລຂາຂະແໜງການຍ່ອຍ ການຄົ້ນຄວ້າ ແລະ ປະເມີນຜົນການສຶກສາ**

1) ທ່ານ ຜູ້ຕາງໜ້າ ຈາກສູນຄົ້ນຄວ້າ ແລະ ປະເມີນຜົນການສຶກສາ, ສວສ ເປັນຫົວໜ້າ
2) ທ່ານ ຜູ້ຕາງໜ້າ ຈາກສະຖາບັນຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກຳ, ສວນ ເປັນຮອງ
3) ທ່ານ ຜູ້ຕາງໜ້າ ຈາກກົມປະກັນຄຸນນະພາບການສຶກສາ, ປຄ ເປັນຮອງ
4) ທ່ານ ຜູ້ຕາງໜ້າ ຈາກຫ້ອງການສະພາວິທະຍາສາດ, ຫສວຊ ເປັນຄະນະ
5) ທ່ານ ຜູ້ຕາງໜ້າ ຈາກສູນຄົ້ນຄວ້າ ແລະ ປະເມີນຜົນ, ສວສ ເປັນຄະນະ
6) ທ່ານ ຜູ້ຕາງໜ້າ ຈາກທະນະຄານໂລກ ປະຈຳ ສປປ ລາວ ແລະ ອົງການແພລນ ສາກົນ ເປັນຄະນະ

7. **ໜ່ວຍງານວິຊາການຂະແໜງການຍ່ອຍ: ກິລາ-ກາຍຍະກຳ**

| | |
|---|---|
| 1) ທ່ານ ຫົວໜ້າກົມກິລາລະດັບສູງ | ເປັນປະທານ |
| 2) ທ່ານ ຫົວໜ້າກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ | ເປັນປະທານຮ່ວມ |
| 3) ອົງການ ຊາຍຟັນ ປະຈຳ ສປປ ລາວ | ເປັນປະທານຮ່ວມ |
| 4) ທ່ານ ຜູ້ອຳນວຍການສະຖາບັນກິລາ-ກາຍຍະກຳ | ເປັນຮອງ |
| 5) ທ່ານ ຮອງຫົວໜ້າກົມກິລາລະດັບສູງ | ເປັນຮອງ |
| 6) ທ່ານ ຮອງຫົວໜ້າກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ | ເປັນຮອງ |
| 7) ທ່ານ ຮອງຫົວໜ້າກົມແຜນການ | ເປັນຄະນະ |
| 8) ທ່ານ ຮອງຫົວໜ້າກົມການເງິນ | ເປັນຄະນະ |
| 9) ທ່ານ ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ | ເປັນຄະນະ |
| 10) ທ່ານ ຮອງຫົວໜ້າກົມກວດກາ | ເປັນຄະນະ |
| 11) ທ່ານ ຜູ້ອຳນວຍການສະໜາມກິລາ ຫຼັກ 16 | ເປັນຄະນະ |
| 12) ທ່ານ ຜູ້ອຳນວຍການວິທະຍາໄລພະລະສຶກສາ | ເປັນຄະນະ |
| 13) ທ່ານ ຜູ້ອຳນວຍການວິທະຍາໄລສິລະປະສຶກສາ | ເປັນຄະນະ |
| 14) ທ່ານ ຜູ້ຕາງໜ້າຈາກສະຫະພັນກິລາແຫ່ງຊາດປະເພດຕ່າງໆ | ເປັນຄະນະ |
| 15) ທ່ານ ຜູ້ຕາງໜ້າຈາກຄູ່ຮ່ວມພັດທະນາ | ເປັນຄະນະ |
| 16) ທ່ານ ຜູ້ຕາງໜ້າຈາກອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ/ສະມາຄົມ ບໍ່ຫວັງຜົນກຳໄລ | ເປັນຄະນະ |

- **ກອງເລຂາຂະແໜງການຍ່ອຍ ກິລາ-ກາຍຍະກຳ**

| | |
|---|---|
| 1) ທ່ານ ຫົວໜ້າພະແນກ ບໍລິຫານ, ຄົ້ນຄວ້າ-ສັງລວມ, ກົມກິລາລະດັບສູງ | ເປັນຫົວໜ້າ |
| 2) ທ່ານ ຫົວໜ້າພະແນກ ບໍລິຫານ, ຄົ້ນຄວ້າ-ສັງລວມ, ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ | ເປັນຮອງ |
| 3) ທ່ານ ຫົວໜ້າພະແນກກວດກາ, ຕິດຕາມແລະປະເມີນຜົນ, ກົມກິລາລະດັບສູງ | ເປັນຄະນະ |
| 4) ທ່ານ ຫົວໜ້າພະແນກ ກວດກາ, ຕິດຕາມ ແລະ ປະເມີນຜົນ, ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ | ເປັນຄະນະ |
| 5) ທ່ານ ຜູ້ຕາງໜ້າ ຈາກສະຖາບັນກິລາ-ກາຍະກຳ | ເປັນຄະນະ |
| 6) ທ່ານ ຜູ້ຕາງໜ້າ ຈາກອົງການຊາຍຟັນ | ເປັນຄະນະ |

**ມາດຕາ 2: ຄະນະທີ່ຖືກແຕ່ງຕັ້ງໃນມາດຕາ 1 ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:**

**ກ. ຄະນະຊີ້ນຳລວມ**

- **ໜ້າທີ່ຂອງຄະນະຊີ້ນຳລວມ ລະດັບຜູ້ບໍລິຫານມີດັ່ງນີ້:**

1) ເພື່ອໃຫ້ທິດຊີ້ນຳດ້ານຍຸດທະສາດ ແລະ ຮັບຮອງເອົາບັນດານະໂຍບາຍ ແລະ ຍຸດທະສາດໃນການພັດທະນາຂອງຂະແໜງການ, ໂດຍການເປັນປະທານຂອງ ທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ແລະ ການເປັນປະທານຮ່ວມຂອງ ທ່ານເອກອັກຄະລັດຖະທູດອົດສະຕຣາລີ ປະຈຳ ສປປ ລາວ ແລະ ທ່ານເອກອັກຄະລັດຖະທູດສະຫະພາບເອີຣົບ ປະຈຳ ສປປ ລາວ;
2) ຊີ້ນຳໜ່ວຍງານວິຊາການ ຂະແໜງການສຶກສາ ແລະ ກິລາ ລະດັບວິຊາການ ແລະ ໜ່ວຍງານວິຊາການຂະແໜງການຍ່ອຍ ໃນການປະເມີນຜົນ, ວິເຄາະ ແລະໃຫ້ການສະໜັບສະໜູນທາງເລືອກໃນການແກ້ໄຂບັນຫາທີ່ເປັນບູລິມະສິດຂອງຂະແໜງການ ໂດຍການກຳນົດບູລິມະສິດໃນແຕ່ລະໄລຍະ;
3) ຮັບຮອງແຜນພັດທະນາຂອງຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ໃນແຕ່ລະໄລຍະ ແລະ ຮັບຮອງຜົນການປະເມີນກາງສະໄໝ;

4) ປະເມີນ, ທົບທວນ ແລະ ຮັບຮອງແຜນງົບປະມານ ແລະ ການເງິນຂອງຂະແໜງການ;
5) ຮັບຮອງແຜນງານ ແລະ ໂຄງການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາ ແລະ ເອກະສານນະໂຍບາຍ ແລະ ນິຕິກຳຕ່າງໆ ທີ່ຕິດພັນກັບການພັດທະນາວຽກງານສຶກສາ, ວິທະຍາສາດ ແລະ ກິລາ ໂດຍຜ່ານກົນໄກ ຈາກການປະສານງານຂອງໜ່ວຍງານວິຊາການຍ່ອຍ;
6) ປະເມີນ, ວິເຄາະ ແລະ ກວດສອບບົດລາຍງານທີ່ຈະສົ່ງໃຫ້ກອງປະຊຸມໂຕະມົນ.

- **ໜ້າທີ່ຂອງຄະນະຊີ້ນຳລວມລະດັບວິຊາການ ມີດັ່ງນີ້:**

1) ປຶກສາຫາລື ເພື່ອສ້າງຄວາມເປັນເອກະພາບຕໍ່ກັບບັນດາບັນຫາ ດ້ານວິຊາການທີ່ພົວພັນເຖິງຂະແໜງການໂດຍລວມ ເພື່ອລາຍງານຕໍ່ປະທານ ແລະ ປະທານຮ່ວມຂອງໜ່ວຍງານວິຊາການຂະແໜງການສຶກສາທິການ ແລະ ກິລາ ລະດັບຜູ້ບໍລິຫານ, ໂດຍການເປັນປະທານຂອງທ່ານຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ; ແລະ ການເປັນປະທານຮ່ວມຂອງທ່ານ ຮອງເອກອັກຄະລັດຖະທູດ ສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ ແລະ ທ່ານ ຫົວໜ້າຝ່າຍການຮ່ວມມື ຂອງສະຫະພາບເອີຣົບ ປະຈຳ ສປປ ລາວ;
2) ຄົ້ນຄວ້າ, ປຶກສາຫາລື ກ່ຽວກັບແຜນພັດທະນາຂອງຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ໃນແຕ່ລະໄລຍະ;
3) ປຶກສາຫາລື ແລະ ດຳເນີນການປະເມີນການສະໄໝຂອງແຜນພັດທະນາຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ໃນແຕ່ລະໄລຍະ;
4) ປຶກສາຫາລື ແລະ ຄົ້ນຄວ້າແຜນງົບປະມານ ແລະ ການເງິນຂອງຂະແໜງການ;
5) ຄົ້ນຄວ້າຮ່ວມກັບຜູ້ໃຫ້ທຶນ ກ່ຽວກັບແຜນງານ ແລະ ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ແລະ ເອກະສານນະໂຍບາຍ ແລະ ນິຕິກຳຕ່າງໆ ທີ່ຕິດພັນກັບການພັດທະນາວຽກງານສຶກສາ, ວິທະຍາສາດ ແລະ ກິລາ ເພື່ອນຳສະເໜີຕໍ່ກອງປະຊຸມໜ່ວຍງານວິຊາການຂະແໜງການສຶກສາທິການ ແລະ ກິລາ ລະດັບຜູ້ບໍລິຫານ ເພື່ອຮັບຮອງ;
6) ຄົ້ນຄວ້າ ແລະ ກະກຽມບົດລາຍງານຂອງຂະແໜງການສຳລັບກອງປະຊຸມໂຕະມົນ ເພື່ອນຳສະເໜີຕໍ່ກອງປະຊຸມ ໜ່ວຍງານວິຊາການຂະແໜງການສຶກສາທິການ ແລະ ກິລາ ລະດັບຜູ້ບໍລິຫານຮັບຮອງ;
7) ອີງຕາມບູລິມະສິດທີ່ກຳນົດໂດຍໜ່ວຍງານວິຊາການຂະແໜງການສຶກສາທິການ ແລະ ກິລາ ລະດັບຜູ້ບໍລິຫານ ໃນແຕ່ລະໄລຍະ, ປະສານງານ-ພົວພັນກັບຄູ່ຮ່ວມພັດທະນາໃນຂະແໜງການ ແລະ ໜ່ວຍງານວິຊາການຂະແໜງການຍ່ອຍ ໃນການສ້າງແຜນປະຕິບັດງານ ແລະ ຕິດຕາມຢ່າງເປັນປົກກະຕິ.

- **ໜ້າທີ່ກອງເລຂາໜ່ວຍງານວິຊາການ**

ກອງເລຂາ ມີໜ້າທີ່ໃນການປະສານງານ; ການກະກຽມກອງປະຊຸມ, ອຳນວຍຄວາມສະດວກ ແລະ ໃຫ້ຄວາມຊ່ວຍເຫຼືອທາງດ້ານວິຊາການ ແກ່ບັນດາໜ່ວຍງານວິຊາການຂະແໜງການຍ່ອຍ; ຊ່ວຍຊຸກຍູ້ຂະບວນການ ໃນກະກຽມແຜນພັດທະນາຂະແໜງການສຶກສາ ແລະ ກິລາ, ເອກະສານນະໂຍບາຍຕ່າງໆ ແລະ ວຽກງານອື່ນໆຕາມການມອບໝາຍ ເພື່ອເຮັດໃຫ້ໜ່ວຍງານວິຊາການຂະແໜງການສຶກສາທິການ ແລະ ກິລາ ສາມາດດຳເນີນກິດຈະກຳຂອງຕົນບັນລຸຕາມແຜນການ.

**ຂ. ໜ້າທີ່ ຂອງໜ່ວຍງານວິຊາການຂອງຂະແໜງການຍ່ອຍ ປະກອບມີດັ່ງນີ້:**

1) ປະເມີນ, ວິເຄາະ ແລະ ໃຫ້ການສະໜັບສະໜູນໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາທິການ ແລະ ກິລາ ໃນລະດັບຂະແໜງການຍ່ອຍ, ໂດຍການເປັນປະທານຂອງທ່ານຫົວໜ້າກົມ ແລະ ຄູ່ຮ່ວມພັດທະນາທີ່ກ່ຽວຂ້ອງ.
2) ເປັນເວທີທີ່ອຳນວຍຄວາມສະດວກໃນການແລກປ່ຽນສົນທະນາ ກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ກ່ຽວກັບຜົນສຳເລັດ, ປະສົບການ ແລະ ຖອດຖອນບົດຮຽນຈາກການຈັດຕັ້ງປະຕິບັດແຜນພັດທະນາ

ແລະ ນະໂຍບາຍ ໃນການພັດທະນາວຽກງານທີ່ຕິດພັນກັບໜ່ວຍງານວິຊາການຂະແໜງການຍ່ອຍຂອງຕົນ;

3) ເປັນເວທີປະສານງານລະຫວ່າງກະຊວງສຶກສາທິການ ແລະ ກິລາ ແລະ ຄູ່ຮ່ວມພັດທະນາດ້ານການສຶກສາ ເພື່ອຮັບປະກັນຄວາມສອດຄ່ອງ ແລະ ການສະໜັບສະໜູນໃຫ້ແກ່ບັນດາບູລິມະສິດຂອງຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ທີ່ໄດ້ລະບຸໄວ້ໃນແຜນງານຂອງຂະແໜງການ ແລະ ພັນທະສາກົນ ລວມທັງເປົ້າໝາຍການພັດທະນາແບບຍືນຍົງ (SDGs).
4) ຕິດຕາມ ແລະ ລາຍງານຄວາມຄືບໜ້າ ກ່ຽວກັບຜົນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການຍ່ອຍທີ່ກ່ຽວຂ້ອງ, ໃນນັ້ນ ລວມທັງການທົບທວນຄວາມຄືບໜ້າຂອງແຜນງານຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ຢ່າງເປັນປົກກະຕິ ແລະ ສ້າງແຜນພັດທະນາຂະແໜງການຍ່ອຍໃໝ່ ຕາມເຫັນສົມຄວນ.
5) ຊຸກຍູ້ ແລະ ຕິດຕາມການສ້າງຄວາມກົມກຽວທັງດ້ານການລົງທຶນຂອງລັດຖະບານ ແລະ ຄູ່ຮ່ວມພັດທະນາ ສຳລັບວຽກງານຂອງໜ່ວຍງານວິຊາການຂະແໜງການຍ່ອຍຂອງຕົນ;
6) ຕິດຕາມ, ທົບທວນຄືນ ແລະ ໃຫ້ຂໍ້ສະເໜີແນະນຳ ກ່ຽວກັບ ບັນດາແຜນການ, ບັນດານະໂຍບາຍ ແລະ ແຜນງານຕ່າງໆຂອງໜ່ວຍງານວິຊາການຂະແໜງການຍ່ອຍຂອງຕົນ;
7) ກຳນົດໂອກາດສຳລັບການສ້າງຂີດຄວາມສາມາດໃຫ້ແກ່ກະຊວງສຶກສາທິການ ແລະ ກິລາ ແລະ ບັນດາຄູ່ຮ່ວມພັດທະນາໃນຂົງເຂດວຽກງານຂອງຕົນ.
8) ໃຫ້ຄຳແນະນຳທາງດ້ານນະໂຍບາຍ ແລະ ອຳນວຍຄວາມສະດວກ ໃນການສົນທະນາລົງເລິກດ້ານວິຊາການ ໂດຍຜ່ານການສ້າງຕັ້ງໜ່ວຍງານວິຊາສະເພາະດ້ານ (Technical working group and Taskforce) ໂດຍອີງຕາມຄວາມຕ້ອງການ ຊຶ່ງຈະລາຍງານເຖິງໜ່ວຍງານວິຊາການຍ່ອຍ.

**ຄ. ພາລະບົດບາດ, ໜ້າທີ່ ແລະ ວາລະ**

- ໜ່ວຍງານວິຊາການຂະແໜງການສຶກສາທິການ ແລະ ກິລາ ຫຼື ພາສາອັງກິດ ເອີ້ນວ່າ: "Education and Sports Sector Working Group - ESSWG" ເປັນໜ່ວຍງານວິຊາການທີ່ບັນຈຸເອົາຄູ່ຮ່ວມພັດທະນາເຂົ້າໃນກົງຈັກດັ່ງກ່າວ ຊຶ່ງມີພາລະບົດບາດເປັນເສນາທິການ ໃຫ້ແກ່ໜ່ວຍງານວິຊາການຂອງລັດຖະບານ ທີ່ມີກະຊວງແຜນການ ແລະ ການລົງທຶນ ເປັນຈຸດປະສານງານຫຼັກ ໃນການຄົ້ນຄວ້າ, ຫັນເອົາແນວທາງນະໂຍບາຍຂອງພັກ, ຍຸດທະສາດ, ແຜນການ, ແຜນງານ, ໂຄງການ ຂອງລັດຖະບານກ່ຽວກັບວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ມາເປັນແຜນຍຸດທະສາດ, ແຜນພັດທະນາຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ໃນແຕ່ລະໄລຍະ ໃຫ້ໄດ້ຮັບຜົນດີ ແລະ ປະກົດຜົນເປັນຈິງ.
- ໜ້າທີ່ຮັບຜິດຊອບຫຼັກ ຂອງໜ່ວຍງານວິຊາການຂະແໜງການສຶກສາທິການ ແລະ ກິລາ ມີດັ່ງນີ້:
  1) ຮັບປະກັນການນຳພາ ແລະ ຄວາມເປັນເຈົ້າການ ຕໍ່ບັນຫາຕ່າງໆ ທີ່ພົວພັນເຖິງຍຸດທະສາດຫຼັກໃນຂະແໜງການສຶກສາທິການ ແລະ ກິລາ;
  2) ຄຸ້ມຄອງ ແລະ ອຳນວຍຄວາມສະດວກໃນການເຊື່ອມສານກັບນະໂຍບາຍລວມ ແລະ ຂອບວຽກຂອງແຜນງານຕ່າງໆ;
  3) ຊຸກຍູ້ຄວາມກົມກຽວ ແລະ ຄວາມງ່າຍດາຍຂອງຂະແໜງການສຶກສາທິການ ແລະ ກິລາ;
  4) ອຳນວຍຄວາມສະດວກໃຫ້ແກ່ການຮັບຜິດຊອບຮ່ວມກັນ ໃນການຄຸ້ມຄອງ ເພື່ອຜົນໄດ້ຮັບຢູ່ໃນຂະແໜງການສຶກສາທິການ ແລະ ກິລາ;
  5) ສົ່ງເສີມການເຈລະຈາກັບພາກສ່ວນທີ່ກ່ຽວຂ້ອງຫຼັກ, ເຊິ່ງລວມມີ ກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນ ໃນການລົງທຶນໃສ່ການພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ;

6) ເພື່ອເປັນເວທີປະສານງານລະຫວ່າງກະຊວງສຶກສາທິການ ແລະ ກິລາ ແລະ ຄູ່ຮ່ວມພັດທະນາດ້ານການສຶກສາ ແລະ ກິລາ ເພື່ອຮັບປະກັນຄວາມສອດຄ່ອງ ແລະ ການສະໜັບສະໜູນໃຫ້ແກ່ບັນດາບູລິມະສິດຂອງຂະແໜງການສຶກສາທິການ ແລະ ກິລາ ທີ່ໄດ້ລະບຸໄວ້ໃນແຜນງານຂະແໜງການ ແລະ ພັນທະສາກົນ ລວມທັງເປົ້າໝາຍການພັດທະນາແບບຍືນຍົງ (SDGs).

- **ວາລະຂອງປະທານຮ່ວມ ແລະ ວາລະການປະຊຸມ**

1) ວາລະຂອງປະທານຮ່ວມຂອງໜ່ວຍງານວິຊາການຂະແໜງການສຶກສາທິການ ແລະ ກິລາ ລະດັບຜູ້ບໍລິຫານ, ລະດັບວິຊາການ ແລະ ໜ່ວຍງານວິຊາການຂະແໜງການຍ່ອຍ ມີວາລະຢ່າງໜ້ອຍ 3 ປີ, ຖ້າບໍ່ມີຜູ້ສະໝັກໃໝ່ ແມ່ນໃຫ້ຄະນະປະຈຸບັນສາມາດສືບຕໍ່ ຈົນກວ່າຈະມີການປ່ຽນແປງ.
2) ກອງປະຊຸມຂອງໜ່ວຍງານວິຊາການຂະແໜງການສຶກສາທິການ ແລະ ກິລາ ລະດັບຜູ້ບໍລິຫານ ຈັດຂຶ້ນ 1-2 ຄັ້ງຕໍ່ປີ ແລະ ລະດັບວິຊາການ ຈັດຂຶ້ນຢ່າງໜ້ອຍ 4 ຄັ້ງຕໍ່ປີ;
3) ກອງປະຊຸມໜ່ວຍງານວິຊາການຂະແໜງການຍ່ອຍ ຈັດຂຶ້ນຢ່າງໜ້ອຍ 3-4 ຄັ້ງຕໍ່ປີ; ໃນຂະນະດຽວກັນ ຖ້າມີຄວາມຈຳເປັນກໍ່ສາມາດຮຽກສະມາຊິກປະຊຸມໄດ້ຫຼາຍກວ່າ 1 ຄັ້ງຕໍ່ໄຕມາດ ໂດຍອີງໃສ່ຄວາມຈຳເປັນ ແລະ ຄວາມຮີບດ່ວນຂອງວຽກງານ;
4) ຫົວຂໍ້ທີ່ນຳມາປຶກສາຫາລືຢູ່ໃນແຕ່ລະກອງປະຊຸມປະຈຳແຕ່ລະໄຕມາດ ຄວນຕິດພັນກັບປະເດັນບັນຫາ ແລະ ວາລະຂອງກອງປະຊຸມລະດັບວິຊາການ ແລະ ກອງປະຊຸມລະດັບຜູ້ບໍລິຫານ ທີ່ຈະຄົ້ນຄວ້າ ແລະ ຮັບຮອງໃນແຕ່ລະໄລຍະ; ນອກນັ້ນ ຍັງມີບັນຫາທີ່ເປັນປະເດັນເຄັ່ງຮ້ອນ ທີ່ຕ້ອງໄດ້ປຶກສາຫາລືກັບຫຼາຍພາກສ່ວນ; ບັນດາເອກະສານນະໂຍບາຍ ແລະ ນິຕິກຳຕ່າງໆ ກໍ່ຄວນນຳມາບັນຈຸເຂົ້າໃນວາລະກອງປະຊຸມປະຈຳໄຕມາດ ຕາມຄວາມເໝາະສົມ;
5) ການເປັນປະທານຂອງກອງປະຊຸມລະດັບວິຊາການ ແລະ ກອງປະຊຸມໜ່ວຍງານວິຊາການຂະແໜງການຍ່ອຍ ແຕ່ລະຄັ້ງ ແມ່ນສາມາດຜັດປ່ຽນກັນໄດ້ ໃນກຸ່ມນັ້ນໆ ຊຶ່ງຈະຂຶ້ນກັບຫົວຂໍ້ເອກະສານທີ່ຈະປຶກສາຫາລືໃນກອງປະຊຸມດັ່ງກ່າວນັ້ນ.

**ມາດຕາ 3:** ງົບປະມານ ທີ່ນຳໃຊ້ເຂົ້າໃນການຈັດກອງປະຊຸມ ແລະ ການບໍລິຫານ-ຄຸ້ມຄອງໜ່ວຍງານວິຊາການຂະແໜງການສຶກສາທິການ ແລະ ກິລາ ແມ່ນນຳໃຊ້ຮ່ວງທຶນຊ່ວຍເຫຼືອລ້າຈາກຄູ່ຮ່ວມພັດທະນາ.

**ມາດຕາ 4:** ໃຫ້ຫ້ອງການກະຊວງ, ບັນດາກົມ, ອົງການທຽບເທົ່າກົມ, ສະຖາບັນ ແລະ ສູນ ພາຍໃນສຳນັກກະຊວງ, ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ;

**ມາດຕາ 5:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງຂອງລັດຖະມົນຕີກວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການປະສານງານ ແລະ ສະໜັບສະໜູນ ວຽກງານການສຶກສາ ແລະ ກິລາ ສະບັບເລກທີ 2347 ລົງວັນທີ 13 ມິຖຸນາ 2020.

**ລັດຖະມົນຕີ**

ກະຊວງສຶກສາທິການ ແລະ ກິລາ

ລັດຖະມົນຕີ

ຮສ.ປອ ພຸດ ສິມມາລາວົງ

**ບ່ອນສົ່ງ:**

- ຫ້ອງການກະຊວງສຶກສາທິການ ແລະ ກິລາ 01 ສະບັບ
- ກົມຈັດຕັ້ງ ແລະ ພະນັກງານ 01 ສະບັບ
- ກົມ ແລະ ສະຖາບັນ, ສູນ ແລະ ພາກສ່ວນກ່ຽວຂ້ອງ ບ່ອນລະ 01 ສະບັບ
- ຄູ່ຮ່ວມພັດທະນາ ບ່ອນລະ 01 ສະບັບ
- ເກັບມ້ຽນ 06 ສະບັບ